ຮັບຮູ້ສິດຂອງທ່ານຕໍ່

# ການປະຕິບັດ ທີ່ເປັນທຳ





# ຮັບຮູ້ສິດຂອງທ່ານຕໍ່ການປະຕິບັດທີ່ເປັນທຳ
## (KNOW YOUR RIGHT TO FAIR TREATMENT)

Department of Employment and Economic Development (DEED, ພະແນກພັດທະນາການຈ້າງງານ ແລະ ເສດຖະກິດ) ມຸ່ງໝັ້ນທີ່ຈະໃຫ້ໂອກາດທີ່ເທົ່າທຽມກັນ ແລະ ການເຂົ້າເຖິງໂຄງການ ແລະ ການບໍລິການຕ່າງໆແກ່ຄົນມີນິໄຊຕາ. ທ່ານມີສິດຕໍ່ການປະຕິບັດທີ່ເປັນທຳ ແລະ ເທົ່າທຽມຈາກຜູ້ໃຫ້ບໍລິການ ແລະ ສິດໃນການຍື່ນຄຳຮ້ອງທຸກກັບລັດຖະບານກາງ, ລັດ ຫຼື ພະນັກງານໃຫ້ໂອກາດເທົ່າທຽມຂອງທ້ອງຖິ່ນ, ຖ້າຫາກທ່ານເຊື່ອວ່າທ່ານໄດ້ຖືກເລືອກປະຕິບັດ.

DEED ຫ້າມການເລືອກປະຕິບັດໃນໂຄງການຂອງຕົນເນື່ອງຈາກເຊື້ອຊາດ, ສີຜິວ, ສາສະໜາ, ເພດ (ລວມທັງການຖືພາ, ການເກີດລູກ ແລະ ສະພາບທາງການແພດທີ່ກ່ຽວຂ້ອງ, ລັກສະນະໂດຍລວມທາງເພດ, ສະຖານະພາບການປ່ຽນເພດ ແລະ ອັດຕະລັກທາງເພດ ແລະ ການສະແດງອອກທາງເພດ), ຊາດກຳເນີດ (ລວມທັງຄວາມສາມາດທາງດ້ານພາສາອັງກິດຈຳກັດ), ອາຍຸ, ຄວາມພິການ ຫຼື ຄວາມກ່ຽວຂ້ອງທາງດ້ານການເມືອງ ຫຼື ຄວາມເຊື່ອ ຫຼື ຕໍ່ກັບຜູ້ໄດ້ຮັບຜົນປະໂຫຍດຈາກ, ຜູ້ສະໝັກ ຫຼືເຂົ້າຮ່ວມໂຄງການທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນພາຍໃຕ້ ພາກທີ I ຂອງກົດໝາຍວ່າດ້ວຍນະວັດຕະກຳ ແລະ ໂອກາດຂອງແຮງງານ, ບົນພື້ນຖານສະຖານະພົນລະເມືອງຂອງບຸກຄົນ ຫຼື ການມີສ່ວນຮ່ວມໃນ WIOA ພາກທີ I – ໂຄງການ ຫຼື ກິດຈະກຳການຊ່ວຍເຫຼືອທາງດ້ານການເງິນ.

## ຜູ້ທີ່ຕ້ອງຕິດຕໍ່ຫາ, ຖ້າຫາກທ່ານຮູ້ສຶກວ່າທ່ານເຄີຍປະສົບກັບການຖືກເລືອກປະຕິບັດ

ທ່ານສາມາດຂໍແບບຟອມການຮ້ອງທຸກ ຫຼື ລົມກັບພະນັກງານໃຫ້ໂອກາດເທົ່າທຽມໂດຍການຕິດຕໍ່ດັ່ງຕໍ່ໄປນີ້:

- ✓ **ພະນັກງານໃຫ້ໂອກາດເທົ່າທຽມກັນໃນທ້ອງຖິ່ນ** – ທ່ານສາມາດຊອກຫາຂໍ້ມູນນີ້ໃນແຈ້ງການໂອກາດເທົ່າທຽມກັນທີ່ປະກາດໄວ້ໃນສູນກຳລັງແຮງງານ (WorkForce Center) ຫຼື ໂດຍການຖາມພະນັກງານຕ້ອນຮັບຢູ່ດ້ານໜ້າ.
- ✓ Office of Diversity and Equal Opportunity (ODEO, ຫ້ອງການຄວາມຫຼາກຫຼາຍ ແລະ ໂອກາດເທົ່າທຽມກັນ)
  - » ອີເມວ: DEED.ODEO@state.mn.us
  - » ໂທລະສັບ: 651-259-7094

## ໜ່ວຍງານທີ່ສຳຄັນອື່ນໆ

### Department of Labor's Civil Rights Center (CRC, ສູນສິດທິພົນລະເມືອງຂອງພະແນກແຮງງານ)

ຖ້າຫາກທ່ານບໍ່ພໍໃຈກັບວິທີການຈັດການກັບການຮ້ອງທຸກພາຍໃນຂອງທ່ານ, ທ່ານມີສິດທີ່ຈະຍື່ນການຮ້ອງທຸກຂອງທ່ານກັບ **Department of Labor's Civil Rights Center (CRC,** ສູນສິດທິພົນລະເມືອງຂອງພະແນກແຮງງານ**).**




**Department of Labor's Civil Rights Center (CRC,** ສູນສິດທິພົນລະເມືອງຂອງພະແນກແຮງງານ**)**
ຜູ້ອຳນວຍການ, Civil Rights Center (CRC, ສູນສິດທິພົນລະເມືອງ) U.S. Department of Labor
200 Constitution Avenue NW, Room N-4123, Washington, DC 20210
ທ່ານຍັງສາມາດເຂົ້າເຖິງເວັບໄຊຂອງ CRC ໄດ້ທີ່ **www.dol.gov/crc**.

### Minnesota Department Of Human Rights (MDHR, ພະແນກສິດທິມະນຸດຂອງລັດມິນິໂຊຕາ)

**Minnesota Department of Human Rights (MDHR**, ພະແນກສິດທິມະນຸດຂອງລັດມິນິໂຊຕາ**)** ຫ້າມການເລືອກປະຕິບັດໃນໂຄງການບໍລິການສາທາລະນະອັນເນື່ອງມາຈາກເຊື້ອຊາດ, ສີຜິວ, ລັດທິ, ສາສະໜາ, ຊາດກຳເນີດ, ຄວາມພິການ, ເພດ, ຄວາມມັກທາງເພດ ຫຼື ສະຖານະພາບໃນການໄດ້ຮັບຄວາມຊ່ວຍເຫຼືອຈາກລັດ. ທ່ານສາມາດຕິດຕໍ່ຫາ **MDHR** ໄດ້ໂດຍທາງໂທລະສັບ, ໄປສະນີ ຫຼື ແບບເຊິ່ງໜ້າ.




**Minnesota Department of Human Rights** (ພະແນກສິດທິມະນຸດຂອງລັດມິນິໂຊຕາ)
Griggs Midway Building, 540 Fairview Ave. North, Suite 201
St. Paul, MN 55104
ອີເມວ: **info.MDHR@state.mn.us**
ຫ້ອງການ St. Paul ໂທລະສັບ: 651-539-1100 ຫຼື 1-800-657-3704
ທ່ານຍັງສາມາດເຂົ້າເຖິງເວັບໄຊຂອງ MDHR ໄດ້ທີ່ **www.mn.gov/mdhr**.



EMPLOYMENT AND
ECONOMIC DEVELOPMENT

CareerForce™

*Minnesota's Career Resource*

ຫຸ້ນສ່ວນທີ່ໜ້າພາກພູມໃຈຂອງເຄືອຂ່າຍສູນກາງວຽກຂອງ
ຊາວອາເມລິກາ

# MN.GOV/DEED

ພາບປະກອບ: VECTEEZY.COM

ມັງກອນ 2022

ສະຖານທີ່ DEED ແລະ Minnesota CareerForce ແມ່ນນາຍຈ້າງ ແລະ ຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ.
ຂໍ້ມູນນີ້ແມ່ນມີໃຫ້ໃນຮູບແບບອື່ນສຳລັບຄົນພິການໂດຍການໂທຫາ
651-259-7094 (ສຽງ) ຫຼື ໂດຍການນຳໃຊ້ບໍລິການຖ່າຍທອດການສື່ສານທີ່ທ່ານຕ້ອງການ.